ສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ

========== 000 ==========

ກະຊວງກະສິກຳ ແລະ ປ່າໄມ້

<u>ກອງທຶນຫຼຸດຜ່ອນຄວາມທຸກຍາກ</u> (ຫລຍ)

ເລກທີ 0449/ຫລຍ

ນະຄອນຫຼວງວຽງຈັນ, ວັນທີ 10 ມີນາ 2020

# ໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາ

ສຳລັບການຈັດພິມປຶ້ມຄູ່ມືປ້ອງການສິ່ງແວດລ້ອມ ແລະ ສັງຄົມ

ສັນຍາເລກທີ: PRF.III-AF/IEC01/G-S/2020 (AF-G-02)

ເຖິງ: ______________________________

1. ກອງທຶນຫລຸດຜ່ອນຄວາມທຸກຍາກ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA), ທະນາຄານໂລກ ສົມທົບກັບກອງທຶນສຳຮອງຈາກບັນດາຜູ້ໃຫ້ທຶນຕ່າງໆ (ຜູ້ໃຫ້ທຶນ) ເພື່ອດຳເນີນການປະມູນຈັດພິມປຶ້ມຄູ່ມືປ້ອງການສິ່ງແວດລ້ອມ ແລະ ສັງຄົມ, ດ້ວຍການສະເໜີໃຫ້ຍື່ນຊອງປະມູນເພື່ອສົມທຽບລາຄາ.
2. ກອງທຶນຫລຸດຜ່ອນຄວາມທຸກຍາກ ຂໍເຊີນໂຮງພິມຂອງທ່ານ ເຂົ້າຍື່ນຊອງສົມທຽບລາຄາ ສຳລັບການຈັດພິມດັ່ງກ່າວຂ້າງເທິງ, ໄລຍະເວລາໃນການສົ່ງມອບແມ່ນ 45 ວັນ. ຕາຕະລາງລະອຽດຂອງສິ່ງພິມມີດັ່ງລຸ່ມນີ້:

| ລ/ດ | ລາຍການສິ່ງພິທມ | ຫົວໜ່ວຍ | ຈຳນວນ | ກຳນົດ ຈັດສົ່ງ | ສະຖານທີ່ ຈັດສົ່ງ |
|---|---|---|---|---|---|
| 1 | ປຶ້ມຄູ່ມືການປ້ອງການ ສິ່ງແວດລ້ອມ ແລະ ສັງຄົມ ພາສາລາວ | ຫົວ | 80 (195 ໜ້າ) | 45 ວັນ | ຫ້ອງການ ຫລຍ ນະຄອນຫລວງວຽງຈັນ |
| 2 | ປຶ້ມຄູ່ມືການປ້ອງການ ສິ່ງແວດລ້ອມ ແລະ ສັງຄົມ ພາສາອັງກິດ | ຫົວ | 25 (185 ໜ້າ) | | |

3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0047/ກງ, ລົງວັນທີ 13 ກຸມພາ 2019.

ຊອງສະເໜີລາຄາ ຈະຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 27/03/2020 ຢູ່ທີ່ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ, ແລະ ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 14:00 ໂມງ, ຂອງວັນທີ 27/03/2020 ຢູ່ທີ່ຫ້ອງການ ທລຍ ຕັ້ງຢູ່ໃນຂົງເຂດສຳນັກງານນາຍົກລັດຖະມົນຕີ, ຖະໜົນສີສະຫວາດ, ບ້ານນາໄຮ່ດ່ຽວເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ.

4. ທ່ານສາມາດສອບຖາມຂໍ້ມູນເພີ້ມເຕີມ ໄດ້ທີ່ຫ້ອງການ ທລຍ, ຕັ້ງຢູ່ໃນຂົງເຂດສຳນັກງານນາຍົກລັດຖະມົນຕີ, ຖະໜົນສີສະຫວາດ, ບ້ານນາໄຮ່ດ່ຽວ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ຕາມວັນ ແລະ ເວລາເຮັດວຽກ ໂທ: 261479-80 (ຕໍ່ 105).

ກອງທຶນຫລຸດຜ່ອນຄວາມທຸກຍາກ,
ຜູ້ອຳນວຍການບໍລິຫານ ທລຍ

ຈິດ ທະວີໃສ